ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 235 /ຄຊກລ.ສຄ
ນະຄອນຫລວງວຽງຈັນ, ວັນທີ: 13 SEP 2017

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2017

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2017 ໄດ້ໄຂຂຶ້ນໃນວັນທີ 28 ເດືອນ ສິງຫາ ປີ 2017, ເວລາ 09:00 ຢູ່ທີຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ, ຮອງຫົວໜ້າຫ້ອງການຊີ້ນຳວຽກງານສະໜັບສະໜູນ, ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 17 ທ່ານ, ຍິງ: 04 ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ.

ໃນກອງປະຊຸມ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 03 ປີ 2017 ແລະ ແຜນຄາດຄະເນ ໃນໄຕມາດ 04 ປີ 2017 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ຝຶກອົບຮົມການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ກັບ ອສບ ທີ່ແຂວງຊຽງຂວາງ ແລະ ແຂວງຫຼວງພະບາງ.

▪ ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫ້ອງການ ຄຊກລ ກໍ່ໄດ້ແຈ້ງກ່ຽວກັບສະຖິຕິການເກີດອຸປະຕິເຫດຈາກ ລບຕ ວຽກງານການປະສານງານໃນຂັ້ນທ້ອງຖິ່ນບາງຄັ້ງແມ່ນຊັກຊ້າໃນກໍລະນີເກີດອຸປະຕິເຫດ, ການລາຍງານຊັກຊ້າ.

- ໃນປີ 2017 ຈົນຮອດປະຈຸບັນເກືອບກາຍເຄິ່ງໃນການເກີດອຸປະຕິເຫດ ເຫັນວ່າມີຈຳນວນຫຼາຍຖ້າ ສົມທຽບກັບປີຜ່ານມາ ສ່ວນສາເຫດມາຈາກການດັງໄຟ, ການຂຸດດິນ, ສະພາບປະຈຸບັນບາງແຂວງບໍ່ເຄີຍມີກໍ່ມີຄື: ແຂວງບໍ່ແກ້ວ, ແຂວງວຽງຈັນ, ແຂວງທີ່ໄດ້ຮັບຜົນກະທົບສູງກວ່າໝູ່ແມ່ນແຂວງຊຽງຂວາງ.
- ຖ້າເປັນໄປໄດ້ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ (VA) ຢາກໄປຮ່ວມຝຶກອົບຮົມນຳໜ່ວຍງານ MRE ເພື່ອແລກປ່ຽນນະໂຍບາຍຂອງໜ່ວຍງານ VA.

• ໜ່ວຍງານຖານຂໍ້ມູນ ຫ້ອງການ ຄຊກລ ໄດ້ລາຍງານການ update ຖານຂໍ້ມູນແຕ່ວັນທີ 1/1/2017 ເຖິງ 15/7/2017 ແລະ ໄດ້ສະເໜີໃຫ້ແຕ່ລະພາກສ່ວນເອົາໃຈໃສ່ໃນການລາຍງານ ເພາະການລາຍງານຂໍ້ມູນເຂົ້າຖານຂໍ້ມູນແຫ່ງຊາດແມ່ນສຳຄັນຫຼາຍ ເພື່ອເປັນຫຼັກຖານ ແລະ ຢັ້ງຢືນຂໍ້ມູນໃນການຂໍທຶນນຳຜູ້ໃຫ້ທຶນ.

• ໜ່ວຍງານຄົ້ນຄວ້າສັງລວມໄດ້ປະກອບວ່າ ກ່ຽວກັບການຄົ້ນຄວ້າ MOU ເຫັນວ່າ ບັນຫາທີ່ພົບພໍ້ແມ່ນເອກະສານບໍ່ຄົບ, ກິດຈະກຳບໍ່ຈະແຈ້ງ, ງົບປະມານບໍ່ລະອຽດ ການລາຍງານບໍ່ທັນເວລາ ແລະ ບໍ່ຖືກຕ້ອງ.

- ໜ່ວຍງານ VA ຂໍປະກອບໃສ່ MOU ຢາກໃຫ້ໜ່ວຍງານຄົ້ນຄວ້າສັງລວມ ເຮັດເປັນຮ່າງວ່າ MOU ແລະ MOA ເຮົາຕ້ອງມີເອກະສານຫຍັງແດ່?.

ບ້ານສີສັງວອນ, ເມືອງໄຊເສດຖາ, ໄປສະນີ: 7261, ໂທ: (856-21) 262386, ແຟັກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະ ທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 04, ປີ 2017 ໃນນີ້ ໄດ້ມີ ທ່ານຜູ້ຕາງໜ້າ ກົມພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າວິທະຍຸແຫ່ງຊາດລາວ, ທ່ານຜູ້ຕາງໜ້າ ສູນກາງຊາວໜຸ່ມ, ທ່ານຜູ້ຕາງໜ້າອົງການນ້ຳໃຈນັກກິລາ ປະຈຳ ສປປ ລາວ, ທ່ານຜູ້ຕາງໜ້າໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ທ່ານຜູ້ຕາງໜ້າອົງການສາກົນເພື່ອຄົນພິການ, ອົງການ ເກັບກູ້ລະເບີດຮາໂລເທັສ໌ (Halo-Trust), ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 03, 2017 ແລະ ແຜນວຽກປະຈຳໄຕມາດ 04, 2017. ສ່ວນລາຍລະອຽດ ຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນ ພ້ອມດ້ວຍແຜນແມ່ນສາມາດເບິ່ງໄດ້ ໃນເອກະສານ ຊ້ອນທ້າຍ.

**ນອກນີ້ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

1. ສູນກາງຊາວໜຸ່ມສະເໜີຢາກໃຫ້ສູນກາງຊາວໜຸ່ມ ມີສ່ວນຮ່ວມໃນກິດຈະກຳ ສະເໜີຖ້າເປັນໄປໄດ້ກໍ່ເຊັນສັນຍາຮ່ວມກັນ.

2.ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ໄດ້ລາຍງານວ່າການລົງເຄື່ອນໄຫວກິດຈະກຳ ການລົງຢ້ຽມຢາມບ້ານຈຳນວນ ຜູ້ເຂົ້າຮ່ວມບໍ່ຫຼາຍປານໃດ ເພາະຖືກຍາມລະດູທຳ ການຜະລິດຂອງປະຊາຊົນ.

3. ອົງການສາກົນເພື່ອຄົນພິການ HI ຝຶກອົບຮົມກິດຈະກຳຄວາມປອດໄພໃຫ້ກັບນາຍບ້ານ, ສາຍຮຸບເງົາ ແລະ ຕິດຕາມກິດຈະກຳສ້າງຄວາມເຂັ້ມແຂງ, ສົ່ງເສີມເບີສາຍດ່ວນ.

- ງົບປະມານດັ່ງກ່າວແມ່ນລວມທັງໝົດຕັ້ງແຕ່ເດືອນ ພຶດສະພາ ເຖິງ ເດືອນ ກໍລະກົດ ແຕ່ສຳລັບ ເດືອນ ສິງຫາແມ່ນຍັງບໍ່ສາມາດສະຫຼຸບລາຍຈ່າຍໄດ້ເທື່ອ.
- ພວກເຮົາມີແຜນຈະຈັດກອງປະຊຸມປິດໂຄງການ ໃນເດືອນ ພະຈິກ 2017 ປະຈຸບັນແມ່ນຢູ່ໃນໄລຍະລະດົມທຶນແຫຼ່ງໃໝ່.

4 . ອົງການ Halo trust ບັນຫາທີ່ພົບເຫັນແມ່ນ ແຕ່ ເດືອນ ເມສາ ຫາ ເດືອນ ສິງຫາ ແມ່ນໄລຍະທີ່ປະຊາຊົນຊຸ້ນຊ້ຽວ ໃນການເຮັດໄຮ່ ແລະ ເຮັດນາ ຈຶ່ງເຫັນວ່າຫຼາຍຄອບຄົວ ແມ່ນນອນຢູ່ໄຮ່ ແລະ ຢູ່ນາ ພວກເຮົາໄດ້ເຮັດກິດຈະກຳຕອນຄ່ຳກັບປະຊາຊົນ.

- ລະດູຝົນບາງບ້ານເປົ້າໝາຍ ແມ່ນໄປບໍ່ໄດ້ ເພາະສະພາບເສັ້ນທາງເປ່ເພ ແລະ ນ້ຳເຊຂຶ້ນຫຼາຍຖ້ວມທາງ, ເຊິ່ງທີມງານກໍ່ໄດ້ປັບປ່ຽນໄປບ້ານທີ່ສາມາດໄປໄດ້.

5. ອົງການນ້ຳໃນນັກກິລາ SOS ໄດ້ສະເໜີວ່າ ແຜນໄຕມາດໜ້າແມ່ນຢາກໃຫ້ ຄຊກລ ເຂົ້າຮ່ວມກອງປະຊຸມ ທີ່ແຂວງຊຽງຂວາງ ສ່ວນລາຍລະອຽດພວກເຮົາຈະສົ່ງບັດເຊີນມາອີກຄັ້ງໜຶ່ງ.

ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:

1. ສະເໜີບັນດາອົງການປະຕິບັດງານເບິ່ງຄືນເລື່ອງ ການລາຍງານ, ຂອດການປະສານງານ ແລະ ງົບປະມານ.
2. ສະເໜີພາກສ່ວນທີ່ກ່ຽວຂ້ອງ, ອົງການປະຕິບັດງານ ເຮັດແນວໃດຈະເຮັດໃຫ້ໂຄງການລະດົມທຶນ ຢາກໃຫ້ມີການປະສານງານຮ່ວມກັນ, ກິດຈະກຳຂອງທ່ານຈະເຮັດຫຍັງແດ່? ເພື່ອຊ່ວຍກັນລະດົມທຶນ ແລະ ປະຕິບັດກິດຈະກຳ ເພື່ອຫຼຸດຜ່ອນອຸປະຕິເຫດຈາກ ລບຕ ໂດຍອີງຕາມແຜນ 5 ປີ ຂອງຂະແໜງການແກ້ໄຂບັນຫາ ລບຕ.
3. ການລາຍງານອຸປະຕິເຫດຈາກ ລບຕ ເຫັນວ່າຍັງມີລັກສະນະຊັກຊ້າ ສະນັ້ນ ສະເໜີໃຫ້ມີເບີສາຍດ່ວນ, ເລື່ອງການປະສານງານ ເພື່ອເປີດເບີນີ້ ແມ່ນມອບໃຫ້ໜ່ວຍງານ MRE, ສ່ວນຜູ້ຮັບເບີສາຍດ່ວນນີ້ແມ່ນມອບໃຫ້ໜ່ວຍງານບໍລິຫານ.
4. ການຄົ້ນຄວ້າ MOU ຫຼາຍໆອົງການກໍ່ມີທາງສຽງວ່າ ມີການຊັກຊ້າ ແຕ່ທັງນີ້ທັງນັ້ນ ຂໍໃຫ້ທຸກໆທ່ານເຂົ້າໃຈນຳກັນ ພວກເຮົາແມ່ນປະຕິບັດຕາມລະບຽບການ ຂັ້ນຕອນການຄົ້ນຄວ້າຈະໄວຂຶ້ນ ຖ້າເອກະສານຄົບ

ຖ້ອນ ແລະ ພາສາລາວ, ພາສາອັງກິດໃຫ້ສອດຄ່ອງກັນ.

5. ເລື່ອງນະໂຍບາຍ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ພາຍຫຼັງອະນຸມັດ ສະເໜີໃຫ້ໜ່ວຍງານ VA ສົ່ງໃຫ້ໜ່ວຍງານ MRE ເພື່ອສົ່ງຕໍ່ໃຫ້ອົງການປະຕິບັດງານ ແລະ ຖ້າຈະມີການຜະລິດເປັນສື່ໂຄສະນາໃຫ້ກັບເຂົາເຈົ້າກໍ່ຈະເປັນການດີ.
6. ໃນການເຄື່ອນໄຫວລົງບ້ານ ສະເໜີໃຫ້ມີອັດຕາກິນ ສໍາລັບອ້າຍນ້ອງ ເພື່ອຊຸກຍູ້ໃຫ້ເຂົາເຈົ້າ ສາມາດນອນຄ້າງຄືນ ແລະ ສະດວກໃນການຈັດກິດຈະກໍາ ທີ່ແທດເໝາະ ກັບເວລາ ຂອງປະຊາຊົນຫຼາຍຂຶ້ນ.

❖ **ໝາຍເຫດ:** ສໍາລັບລາຍລະອຽດຂອງການເຄື່ອນໄຫວກິດຈະກໍາ ແລະ ແຜນການເຄື່ອນໄຫວເຮັດວຽກໃນໄຕມາດ ຕໍ່ໄປ ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຂັດຕິດ.

**ປະທານກອງປະຊຸມ**

ບຸນເພັງ ສີສະຫວັດ
Mr.Bounpheng SISAWATH

**ບັນທຶກກອງປະຊຸມໂດຍ:**